UNGEI United Nations Girls' Education Initiative

GLOBAL CAMPAIGN FOR EDUCATION www.campaignforeducation.org

ຮຽນ:  ທ່ານ ຜູ້ອຳນວຍການໂຮງຮຽນ, ຄູ ແລະ ອາຈານ ໃນໂຮງຮຽນ ຫຼື ວິທະຍາໄລ

**ອີງຕາມ: ການເປີດບັ້ນໂຄສະນາຂອງໂລກ ແລະ ອົງການ UNGEI ກ່ຽວກັບບົດຮຽນທີ່ຍິ່ງໃຫຍ່ ສຳລັບການສຶກສາເດັກຍິງ ອາທິດປະຕິບັດການຂອງໂລກ ປະຈຳປີ 2011:  "ມັນຖືກຕ້ອງແລ້ວ, ເຮັດໃຫ້ມັນຖືກຕ້ອງ!  ໃຫ້ການສຶກສາແກ່ເດັກຍິງ ແລະ ແມ່ຍິງ ດຽວນີ້!"**

ອົງການສະຫະປະຊາຊາດປະຈຳພາກພື້ນອາຊີປາຊີຟິກ ທີ່ລິເລີ່ມການສຶກສາສຳລັບເດັກຍິງ  (EAP UNGEI) ກຳລັງເປີດບັ້ນໂຄສະນາຂົນຂວາຍຂອງໂລກ ກ່ຽວກັບການສຶກສາ, ຈຶ່ງມີຄວາມຍິນດີເປັນຢ່າງຍິ່ງເຊື້ອເຊີນ     ໂຮງຮຽນຂອງ ທ່ານ ປະກອບສ່ວນເຂົ້າຮ່ວມໃນຂະບວນການທີ່ເປັນສ່ວນໜຶ່ງໃນ **ບົດຮຽນທີ່ຍິ່ງໃຫຍ່** ຄັ້ງນີ້, ຊຶ່ງຈະ ຈັດຂຶ້ນໃນວັນທີ **2-8 ພຶດສະພາ 2011**. ຫຼາຍກວ່າ 100 ປະເທດໃນທົ່ວໂລກ, ເດັກ ແລະ ຜູ້ໃຫຍ່ ລ້ານໆຄົນ ຈະປະກອບສ່ວນໃນກິດຈະກຳ **ບົດຮຽນທີ່ຍິ່ງໃຫຍ່** ຄັ້ງນີ້ ເພື່ອຟັງບົດເລື່ອງທີ່ປະທັບໃຈ ຈາກຜົນງານອັນຍິ່ງໃຫຍ່ ຂອງແມ່ຍິງ ແລະ ເດັກຍິງ ທີ່ເຮັດສຳເລັດຢູ່ໂຮງຮຽນ, ແຕ່ສິ່ງທີ່ເຂົາປະຕິບັດມານັ້ນ ຍັງມີປະກົດການຈຳນວນໜຶ່ງ ກີດຂວາງເຂົາເຈົ້າຢູ່. ພວກເຮົາ ຫວັງຢ່າງຍິ່ງວ່າ ໂຮງຮຽນຂອງ ທ່ານ ຈະສາມາດປະກອບສ່ວນ ໃນກິດຈະກຳທີ່ສຳຄັນຄັ້ງນີ້ ແລະ ຍັງເປັນການສຶກສາດ້ວຍວິທີການສ້າງບັນຍາກາດອັນມ່ວນຊື່ນໃຫ້ແກ່ຜູ້ຮຽນອີກດ້ວຍ.

**ບົດຮຽນທີ່ຍິ່ງໃຫຍ່** ຄັ້ງນີ້ ແມ່ນສະແດງໃຫ້ເຫັນເຖິງຄວາມສຳຄັນທີ່ເດັກຍິງ ແລະ ແມ່ຍິງມີການສຶກສາ. ເດັກຍິງ ແລະ ແມ່ຍິງ ຈຳນວນຫຼວງຫຼາຍ ບໍ່ສາມາດອ່ານ ຫຼື ຂຽນໄດ້ ຍ້ອນວ່າເຂົາເຈົ້າບໍ່ເຄີຍໄດ້ເຂົ້າໂຮງຮຽນຈັກເທື່ອ. ຈຳນວນໜຶ່ງເຄີຍເຂົ້າໂຮງຮຽນ ແຕ່ຊໍ້າພັດອອກໄປແລ້ວ ຍ້ອນຄອບຄົວບໍ່ມີເງິນສົ່ງເສີມ. ການນຳຂອງປະເທດ ໄດ້ໃຫ້ຄຳໝັ້ນສັນຍາວ່າຈະສ້າງທຸກເງື່ອນໄຂເທົ່າທີ່ຈະເຮັດໄດ້ ໃຫ້ເດັກຍິງ ແລະ ແມ່ຍິງທຸກຄົນ ໄດ້ໄປເຂົ້າໂຮງຮຽນ ແລະ ຫວັງເປັນຢ່າງຍິ່ງວ່າຄຳສັນຍາດັ່ງກ່າວຈະຖືກປະຕິບັດທີ່ແທ້ຈິງໃນປີ 2011.

ຄູ ແລະ ນັກຮຽນ ໃນໂຮງຮຽນຂອງ ທ່ານ ຈະມີໂອກາດເປັນສ່ວນໜຶ່ງຮ່ວມກັບຄົນອື່ນໆໃນໂລກນັບເປັນລ້ານໆຄົນໃນການປະຕິບັດກິດຈະກຳ ແລະ ເຫດການທີ່ຕື່ນເຕັ້ນນີ້. ປະສົບການບົດສອນທີ່ເປັນບົດຮຽນນັ້ນ ຈະຖືກແລກປ່ຽນໃຫ້ຄູ່ຮ່ວມງານຂອງອົງການ UNGEI ໃນທົ່ວພາກພື້ນ, ໂດຍສະເພາະ ໃນຕອນທ້າຍຂອງກິດຈະກຳແຂ່ງຂັນຮູບແຕ້ມ. ໃນຕອນທ້າຍຂອງບົດຮຽນຄັ້ງນີ້ ພວກເຮົາຢາກໃຫ້ໂຮງຮຽນຂອງ ທ່ານ ປະກອບສ່ວນເຂົ້າໃນລະບົບສາຍອອນໄລນ໌ເໝືອນກັນແລ້ວໂຮງຮຽນຂອງ ທ່ານ ຈະຖືກນັບເຂົ້າເປັນໜຶ່ງໃນພັນໆໂຮງຮຽນທີ່ມີສາຍພົວພັນກັນໃນທົ່ວໂລກ.

ພວກເຮົາກະກຽມວິທະຍາກອນຈຳນວນໜຶ່ງ ເພື່ອຊ່ວຍ ທ່ານ ໃນການປະກອບສ່ວນເຂົ້າໃນກິດຈະກຳ **ບົດຮຽນທີ່ຍິ່ງໃຫຍ່** ຄັ້ງນີ້.

- ບົດສອນ ບົດຮຽນທີ່ຍິ່ງໃຫຍ່
- ການແນະນຳກິດຈະກຳແຂ່ງຂັນແຕ້ມຮູບ

ພວກເຮົາຫວັງຢ່າງຍິ່ງວ່າ ທ່ານ ຈະພິຈາລະນາ ເພື່ອເຂົ້າຮ່ວມເປັນສ່ວນໜຶ່ງໃນການປະຕິບັດກິດຈະກຳທີ່ຕື່ນເຕັ້ນຄັ້ງນີ້ ເພື່ອຊ່ວຍເດັກຍິງ ແລະ ແມ່ຍິງ ແຕ່ລະຄົນ ໃຫ້ມີໂອກາດໄດ້ຮັບການສຶກສາ.

ຮຽນມາດ້ວຍຄວາມນັບຖື ແລະ ຈິງໃຈ,

# ອາທິດປະຕິບັດການຂອງໂລກ ປະຈຳປີ 2011: ບົດສອນ "ບົດຮຽນທີ່ຍິ່ງໃຫຍ່"
# "ຖືກຕ້ອງແລ້ວ, ເຮັດໃຫ້ມັນຖືກຕ້ອງ! ໃຫ້ການສຶກສາແກ່ເດັກຍິງ ແລະ ແມ່ຍິງດຽວນີ້!"

**ຈຸດປະສົງ**

1. ເພື່ອສົນທະນາຄວາມເປັນຈິງທີ່ວ່າເດັກ ແລະ ຜູ້ໃຫຍ່ ເປັນລ້ານໆຄົນ ບໍ່ເຄີຍມີໂອກາດເຂົ້າໂຮງຮຽນ ຊຶ່ງສ່ວນຫຼາຍແລ້ວແມ່ນເດັກຍິງ ແລະ ແມ່ຍິງ.
2. ເພື່ອໃຫ້ຮັບຮູ້ ແລະ ຊຸກຍູ້ໃຫ້ນັກຮຽນ ມອງໂລກດ້ວຍແນວຄວາມຄິດ ແລະ ສາຍຕາບົດບາດ ຍິງ-ຊາຍ.
3. ເພື່ອສົນທະນາຄຳໝັ້ນສັນຍາທີ່ຜູ້ນຳໂລກໄດ້ໃຫ້ໄວ້ ແລະ ຄວາມເປັນຈິງບໍ່ທັນສຳເລັດການປະຕິບັດຄຳໝັ້ນສັນຍາທີ່ໄດ້ໃຫ້ໄວ້ນັ້ນ.
4. ເພື່ອຊຸກຍູ້ໃຫ້ນັກຮຽນສາມາດສົ່ງຂໍ້ຄວາມກ່ຽວກັບການໃຫ້ສຶກສາແກ່ເດັກຍິງ ແລະ ແມ່ຍິງ ໃນນາມເປັນສ່ວນໜຶ່ງຊ່ວຍໂລກໃບນີ້.

ໃນຕອນທ້າຍຂອງບົດຮຽນ ຜູ້ຮຽນຈະ:

- ເຂົ້າໃຈຜົນປະໂຫຍດທີ່ຈະໄດ້ຈາກການສຶກສາຂອງເດັກຍິງ.
- ປັບຕົວຊື່ນຊົມຕໍ່ຄວາມແຕກຕ່າງໆທາງດ້ານຊີວິດຂອງເດັກ ທີ່ມາຈາກແຕ່ລະຊີກໂລກ.
- ເຂົ້າໃຈສິ່ງທີ່ຈະເຮັດໃຫ້ເດັກຍິງສາມາດໄປໂຮງຮຽນໄດ້ເທົ່າທີ່ຈະເຮັດໄດ້ ກໍຄືລົບລ້າງທຸກອຸປະສັກທີ່ກີດຂວາງການເຂົ້າຮຽນຂອງເຂົາເຈົ້າ.

## <u>ພາກ ກ</u>

### ບາດກ້າວ ກ: ພາກສະເໜີ (5 ນາທີ)

ຄູອະທິບາຍວ່າ ເດັກໃນປະເທດຕ່າງໆທົ່ວໂລກ ໄດ້ປະກອບສ່ວນສ້າງປະຫວັດສາດອັນຍິ່ງໃຫຍ່ທາງດ້ານຄວາມສາມັກຄີ ຊຶ່ງໃນນັ້ນໄດ້ຊ່ວຍແມ່ຍິງ ແລະ ເດັກຍິງ ນັບເປັນລ້ານໆຄົນ ທີ່ບໍ່ໄດ້ຮັບການສຶກສາ.

ຄູຖາມນັກຮຽນໝົດຫ້ອງວ່າ ເຂົາຮູ້ຈັກຄົນທີ່ບໍ່ໄດ້ເຂົ້າໂຮງຮຽນ ແລະ ໃນຈຳນວນດັ່ງກ່າວນັ້ນແມ່ນ ແມ່ຍິງ ແລະ ເດັກຍິງ ຈັກຄົນ.

ຄູສາມາດແລກປ່ຽນຄວາມຈິງດ້ານສະຖິຕິພື້ນຖານຈຳນວນໜຶ່ງເຊັ່ນ:

- ເດັກ 72 ລ້ານໃນໂລກບໍ່ໄດ້ເຂົ້າໂຮງຮຽນ;
- ໃນຈຳນວນດັ່ງກ່າວ 54 ເປີເຊັນ (ເກືອບ 39 ລ້ານຄົນ) ແມ່ນເດັກຍິງ ແລະ
- ສອງສ່ວນສາມຂອງຄົນກືກໜັງສືແມ່ນແມ່ຍິງ.

ເດັກຍິງບໍ່ຮູ້ໜັງສືມັກຈະ:

- ແຕ່ງງານໄວ;
- ມີລູກຂາດອາຫານໂພຊະນາການ ແລະ ລູກມັກເຈັບເປັນ; ແລະ
- ທຸກຍາກ.

ຄູຖາມນັກຮຽນອີກວ່າ ເຂົາຮູ້ຈັກແມ່ຍິງ ຫຼື ເດັກຍິງຄົນໃດທີ່ມີໜ້າທີ່ທີ່ສຳຄັນ. ແມ່ຍິງຄົນນັ້ນໄດ້ເຂົ້າໂຮງຮຽນບໍ?

## ພາກ ຂ – ບົດບາດ ຍິງ-ຊາຍ ແລະ ການສຶກສາ

ຄູຖາມ ແລະ ຊຸກຍູ້ນັກຮຽນ ໃຫ້ເຂົາເຈົ້າສາມາດກຳນົດສະພາບການທີ່ພາໃຫ້ເພີ່ມຄວາມແຕກຕ່າງ ລະຫວ່າງ ເດັກຍິງ ແລະ ເດັກຊາຍ ທີ່ເປັນສິ່ງກະທົບຕໍ່ການຮຽນຂອງພວກເຂົາເຈົ້າເຫຼົ່ານັ້ນ.

ຄູຖາມນັກຮຽນອີກ ກ່ຽວກັບຄວາມສຳຄັນດ້ານໂອກາດທາງການສຶກສາ ສຳລັບແມ່ຍິງ ໃນການພັດທະນາປະເທດຊາດ.

(*ສຳລັບຫ້ອງໃຫຍ່ແດ່ແລ້ວ ໃຫ້ສົນທະນາເຖິງ ສົນທິສັນຍາກ່ຽວກັບສິດທິເດັກ*). ເນື້ອໃນຂອງສົນທິສັນຍາດັ່ງກ່າວສາມາດ ສັງລວມຄື:

- ສົນທິສັນຍາວ່າດ້ວຍສິດທິເດັກ (CRC) ໄດ້ຮັບການຮັບຮອງ ແລະ ປະກາດໃຊ້ໃນປີ 1989 ແລະ ແມ່ນເອກະສານນິຕິກຳສາກົນທຳອິດ ທີ່ເປັນເຄື່ອງມືໃຫ້ແກ່ການຮ່ວມມືໃນລະດັບສາກົນ ທີ່ປະກອບດ້ວຍສິດທິມະນຸດດ້ານຕ່າງໆ ຢ່າງຄົບຊຸດ.
- ສົນທິສັນຍາດັ່ງກ່າວ ໄດ້ລະບຸເຖິງສິດທິພື້ນຖານຂອງມະນຸດ ຊຶ່ງເດັກເຖິງຈະຢູ່ແຫ່ງຫົນໃດກໍຕາມ ແມ່ນປາສະຈາກການຈຳແນກທາງດ້ານສະຖານະພາບ, ສາດສະໜາ, ເຊື້ອຊາດ, ຜິວພັນ ແລະ ອື່ນໆ. ເນື້ອໃນລວມມີ: ສິດຢູ່ລອດ; ສິດໃນການໄດ້ຮັບການພັດທະນາຢ່າງເຕັມສ່ວນ; ສິດໃນການປົກປ້ອງຈາກການໃຊ້ຄວາມຮຸນແຮງ, ທາລຸນ ແລະ ຖືກຂົ່ມຂືນທຳຊຳເລົາ; ແລະ ສິດໃນ ການມີສ່ວນຮ່ວມຢ່າງເຕັມສ່ວນໃນຄອບຄົວ, ຊີວິດດ້ານວັດທະນະທຳ ແລະ ສັງຄົມ. ສີ່ຫຼັກການພື້ນຖານຂອງສົນທິສັນຍາ ດັ່ງກ່າວແມ່ນ ການບໍ່ຈຳແນກ, ການສົ່ງເສີມພອນສະຫວັນຂອງເດັກ; ສິດທິໃນການດຳລົງຊີວິດ, ຢູ່ລອດ ແລະ ພັດທະນາ; ແລະ ນັບຖືຄຳຄິດຄຳເຫັນຂອງເດັກ.
- ສົນທິສັນຍາດັ່ງກ່າວ ແມ່ນໄດ້ຮັບການຮັບຮອງປະຕິບັດຢ່າງກວ້າງຂວາງ ຊຶ່ງປະຈຸບັນ ມີ194 ປະເທດເປັນລັດພາຄີ.
- ໂດຍການເຫັນດີເຫັນພ້ອມໃນການປະຕິບັດສົນທິສັນຍາສາກົນ ວ່າດ້ວຍສິດທິເດັກ (CRC) (ດ້ວຍການລົງນາມ ແລະ ນຳໄປປະຕິບັດ), ລັດຖະບານຂອງແຕ່ລະປະເທດ ໄດ້ໃຫ້ຄຳໝັ້ນສັນຍາຕໍ່ຕົນເອງ ໃນການປົກປ້ອງ ແລະ ຮັບປະກັນດ້ານສິດທິເດັກ ແລະ ລັດຖະບານເອງກໍຍັງຕົກລົງໃຫ້ຄຳໝັ້ນສັນຍາໃນດ້ານປະຕິບັດຕໍ່ໜ້າຊຸມຊົນສາກົນອີກ.

ຄູແລກປ່ຽນຄວາມຮູ້ດັ່ງກ່າວມານັ້ນໃຫ້ນັກຮຽນ ແລະ ພາສົນທະນາກ່ຽວກັບພູມສາດ, ວັດທະນະທຳ ແລະ ເງື່ອນໄຂທາງການດຳລົງຊີວິດທີ່ແຕກຕ່າງກັນຂອງເດັກ ໃນບັນດາປະເທດດ້ອຍພັດທະນາ.

ຄູຖາມນັກຮຽນເຖິງ ຄວາມສາມາດຂອງເຂົາເຈົ້າ ໃນການຊ່ວຍ ແລະ ສົ່ງເສີມໂອກາດເທົ່າທຽມກັນທາງດ້ານການສຶກສາ ໃຫ້ແກ່ທັງແມ່ຍິງ ແລະ ຜູ້ຊາຍ.

ຄູຖາມນັກຮຽນ ເພື່ອລະບຸຊື່ອາຊີບຈຳນວນໜຶ່ງ ທີ່ເຂົາເຈົ້າຮູ້ ແລະ ຖາມເຂົາເຈົ້າເບິ່ງວ່າ ໂດຍທົ່ວໄປແລ້ວແມ່ນວຽກຂອງ ຍິງ ແລະ/ຫຼື ຊາຍ.

ຄູຖາມນັກຮຽນເຖິງວຽກທີ່ເຂົາເຈົ້າຕ້ອງເຮັດຢູ່ບ້ານ. ມີບາງວຽກບໍທີ່ຕ້ອງແມ່ນສະເພາະແມ່ຍິງ/ຊາຍ? ການແບ່ງງານດັ່ງກ່າວ ຍຸຕິທຳບໍ?

ຄູຖາມນັກຮຽນວ່າ ເຂົາເຈົ້າຮູ້ສຶກສາແນວໃດ ຖ້າ ພໍ່-ແມ່ ບອກວ່າບໍ່ໃຫ້ໄປໂຮງຮຽນ ຍ້ອນວ່າມີຫຼາຍວຽກທີ່ຕ້ອງໄດ້ເຮັດຢູ່ບ້ານ.

ຄູຖາມນັກຮຽນວ່າ ຍ້ອນຫຍັງການໄປໂຮງຮຽນຈຶ່ງສຳຄັນ ແລະ ຖາມເຖິງເຫດຜົນວ່າ ເປັນຫຍັງເດັກຈຳນວນໜຶ່ງ ຈຶ່ງບໍ່ໄປໂຮງຮຽນ, ໂດຍສະເພາະແມ່ນເດັກຍິງ

ຄຳຕອບອາດແມ່ນ:

- *ເດັກຈຳນວນໜຶ່ງດຳລົງຊີວິດໃນເຂດມີຂໍ້ຂັດແຍ່ງ ຫຼື ເຂດທີ່ມີຜົນກະທົບຈາກໄພທຳມະຊາດ;*
- *ໃນວັດທະນະທຳຈຳນວນໜຶ່ງ, ເດັກຍິງບໍ່ໄດ້ຮັບບູລິມະສິດໃຫ້ໄປຮຽນ ຍ້ອນດ້ານງົບປະມານຈຳກັດ;*
- *ເດັກຍິງມັກຈະພັກດັນໃຫ້ອອກໂຮງຮຽນ, ແຕ່ງງານຕັ້ງແຕ່ອາຍຸຍັງເຍົາໄວ, ສະນັ້ນ ເຂົາເຈົ້າຕ້ອງເປັນຜູ້ຮັບຜິດຊອບຕໍ່ ວຽກເຮືອນການຊານ;*
- *ເດັກຈຳນວນໜຶ່ງຢູ່ໄກຈາກໂຮງຮຽນ ແລະ ການມາໂຮງຮຽນອາດພົບກັບອັນຕະລາຍນາໆປະການ, ສະນັ້ນ ເຂົາຈຶ່ງຢູ່ບ້ານ, ໂດຍສະເພາະເດັກຍິງ ແມ່ນເປົ້າໝາຍສ່ຽງຕໍ່ຄວາມຮຸນແຮງ ແລະ ທາລຸນທາງເພດ;*
- *ຄວາມທຸກຍາກ: ເດັກຈຳນວນໜຶ່ງຕ້ອງໄດ້ປະກອບສ່ວນຊ່ວຍຄອບຄົວໃນການຫາລາຍໄດ້ ໂດຍການໃຊ້ແຮງງານເດັກ;*
- *ເຂົາເຈົ້າບໍ່ມີເງິນຊື້ປຶ້ມ ແລະ ຊຸດນັກຮຽນ;*
- *ເຂົາເຈົ້າບໍ່ມີເງິນ ໃນການຈ່າຍຄ່າຕ່າງໆໃຫ້ໂຮງຮຽນ;*
- *ບໍ່ມີໂຮງຮຽນພຽງພໍ ໃຫ້ເດັກແຕ່ລະຄົນໄດ້ເຂົ້າຮຽນ; ແລະ*
- *ບໍ່ມີຄູພຽງພໍ.*

## ພາກ ຄ – ຈະສາມາດເຮັດແນວໃດ (10 ນາທີ)

ຄູຖາມນັກຮຽນວ່າ ເຂົາເຈົ້າຄິດວ່າຈະເຮັດແນວໃດ ເພື່ອສ້າງຄວາມສະດວກກວ່າເກົ່າ ໃຫ້ເດັກຍິງໄດ້ໄປໂຮງຮຽນ. ບາງຄຳຕອບ ອາດຈະແມ່ນ:

- *ເພີ່ມການສະໜັບສະໜູນຈາກລັດຖະບານ ຕໍ່ກັບການຮຽນຂອງເດັກຍິງ ເພື່ອການພັດທະນາໂລກ;*
- *ສະໜອງສຸຂະອານາໄມ ສຳລັບເດັກຍິງ ເພື່ອປົກປ້ອງສິ່ງສ່ວນຕົວຂອງເຂົາເຈົ້າ;*
- *ລຶບລ້າງສິ່ງຄອງເດີມ ໃນການເຮັດໃຫ້ເດັກຍິງຮູ້ສຶກວ່າຕົນເອງຕ່ຳຕ້ອຍກວ່າ;*
- *ລຶບລ້າງຄ່າໃຊ້ຈ່າຍຕ່າງໆໃນໂຮງຮຽນ ແລະ ຄ່າອື່ນໆ ທີ່ເປັນການກີດຂວາງການຮຽນ; ແລະ*
- *ຊຸກຍູ້ໃຫ້ເດັກຊາຍ ແລະ ຜູ້ຊາຍ ບຸກລະດົມສົ່ງເສີມການຮຽນຂອງ ເດັກຍິງ ແລະ ແມ່ຍິງ..*

ຄູຖາມຄຳຖາມຕໍ່ໄປນີ້ ໃຫ້ນັກຮຽນທັງໝົດຫ້ອງ. ຖ້າມີພາກສ່ວນທີ່ຮັບຜິດຊອບຢູ່ໃກ້, ຄູອາດເຊີນໃຫ້ມາຕອບຄຳຖາມເຫຼົ່ານີ້ ຈຳນວນໜຶ່ງ:

- *ມີເດັກຈັກຄົນໃນໂລກນີ້ທີ່ບໍ່ໄດ້ເຂົ້າໂຮງຮຽນ?*

- *ເດັກກຸ່ມໃດ ເປັນພວກທີ່ດ້ອຍໂອກາດກວ່າໝູ່ໃນການເຂົ້າເຖິງການສຶກສາ?*
- *ຈົ່ງບອກຊື່ແມ່ຍິງຄົນໜຶ່ງທີ່ໄດ້ຮັບການສຶກສາ*
- *ຈົ່ງບອກເຫດຜົນຈຳນວນໜຶ່ງວ່າ ຍ້ອນຫຍັງການສຶກສາຈຶ່ງສຳຄັນ.*
- *ຈະຕ້ອງເຮັດຫຍັງແດ່ ເພື່ອສົ່ງເສີມການສຶກສາສຳລັບເດັກຍິງ ແລະ ເດັກຊາຍ?*

## ພາກ ໆ. ກິດຈະກຳ (30 ນາທີ)

ຄູຖາມນັກຮຽນ ເພື່ອຄົ້ນຄິດເຖິງເຫດຜົນວ່າ ເປັນຫຍັງຈຶ່ງສຳຄັນ ທີ່ຕ້ອງໃຫ້ການສຶກສາແກ່ເດັກຍິງ, ໂດຍອາດນຳໃຊ້ສື່/ຮູບພາບປະຈັກຕາຊ່ວຍ ແລະ ໃຫ້ນັກຮຽນຕອບຄຳຖາມ "ການສຶກສາຂອງເດັກຍິງ ຊ່ວຍພວກເຮົາທຸກຄົນໄດ້ແນວໃດ?"

ກະລຸນາຈົ່ງອີງໃສ່ເນື້ອໃນຂອງການແຂ່ງຂັນແຕ້ມຮູບ ເພື່ອອະທິບາຍຕື່ມ (ເນື້ອໃນການແຂ່ງຂັນແຕ້ມຮູບ ແມ່ນເປັນພື້ນຖານໃຫ້ແກ່ການອາສາສະໝັກ. ໂຮງຮຽນສາມາດໃຫ້ເດັກເຮັດກິດຈະກຳນີ້ ດ້ວຍໃຊ້ເນື້ອໃນອື່ນ, ແຕ່ໃຫ້ນັກຮຽນ ແລະ ໂຮງຮຽນເກັບຮັກສາຮູບແຕ້ມເຫຼົ່ານັ້ນໄວ້).

ຄຳຕອບຕົວຢ່າງຈຳນວນໜຶ່ງຄື:

- *ເດັກຍິງທີ່ໄດ້ຮັບການສຶກສາໃນວັນນີ້ ໃຫຍ່ຂຶ້ນມາຈະເປັນແມ່ຍິງທີ່ມີການສຶກສາໃນວັນໜ້າ ເໝືອນຄົນທີ່ມີສຸຂະພາບດີກວ່າ, ຈະມີຄວາມສາມາດທາງດ້ານເສດຖະກິດກວ່າ ແລະ ແນ່ນອນວ່າ ລູກໆຂອງລາວກໍຈະໄດ້ໄປໂຮງຮຽນເຊັ່ນດຽວກັນ.*
- *ແມ່ຍິງທີ່ໄດ້ຮັບການສຶກສາ ສາມາດດູແລດ້ານສຸຂະພາບຂອງຕົນເອງ ແລະ ຂອງລູກໄດ້ດີກວ່າ;*
- *ການແຕ່ງງານແຕ່ອາຍຸເຍົາໄວ ກໍຖືກເລື່ອນໄປ, ຮູ້ປ້ອງກັນ ແລະ ຫຼຸດຜ່ອນການຕິດເຊື້ອໂລກແອດສ໌.*

ຄູຖາມທັງໝົດຫ້ອງ ເພື່ອຄົ້ນຄິດເບິ່ງວ່າ ຊີວິດຂອງເດັກຍິງຈະເປັນແນວໃດ ຖ້າຫາກລາວບໍ່ເຄີຍເຂົ້າໂຮງຮຽນຈັກເທື່ອ?

- *ຄູໃຫ້ເວລາແກ່ນັກຮຽນ 2-3 ຄົນ ຕອບເຖິງຜົນກະທົບທີ່ບໍ່ມີການສຶກສາ.*

ຄູໃຫ້ຕົວຢ່າງ ຜົນປະໂຫຍດຂອງການສຶກສາຕໍ່ແຕ່ລະຄົນ ລວມທັງເດັກຍິງ. ຕົວຢ່າງຈຳນວນໜຶ່ງອາດແມ່ນ:

- *ຜູ້ທີ່ຮູ້ໜັງສື ຈະເປັນຜູ້ຮູ້ຈັກອານາໄມ ແລະ ມີສຸຂະພາບແຂງແຮງກວ່າ ຍ້ອນວ່າ ເຂົາເຈົ້າມີທາງເລືອກດ້ານສຸຂະພາບຫຼາຍກວ່າໃນການດຳລົງຊີວິດຂອງເຂົາເຈົ້າ ແລະ ເຂົາກໍສາມາດເຂົ້າເຖິງຂໍ້ມູນຂ່າວສານດ້ານສຸຂະພາບ.*
- *ການສຶກສາເປັນເຄື່ອງມືຕໍ່ສູ້ກັບຄວາມອຶດຫິວ. ແມ່ຍິງທີ່ມີການສຶກສາ ສາມາດໃຫ້ອາຫານໂພຊະນາການທີ່ດີແກ່ລູກ.*
- *ການສຶກສາຊ່ວຍຊີວິດ. ເດັກທີ່ເກີດມາມີແມ່ທີ່ໄດ້ຮັບການສຶກສາ ມີສາມາດສອງເທົ່າຕົວ ໃນການດູແລເບິ່ງແຍງຊີວິດຂອງລູກ ແຕ່ເກີດເຖິງຫ້າປີໃຫ້ພົ້ນຈາກພະຍາດບຽດບຽນ.*
- *ການສຶກສາຊ່ວຍໃຫ້ຫຼຸດພົ້ນຈາກຄວາມທຸກຍາກ.*

ຄູຖາມໝົດຫ້ອງຮຽນຕື່ມອີກວ່າ ເຂົາເຈົ້າຮູ້ສຶກວ່າຍຸຕິທຳບໍ, ຖ້າບໍ່ໃຫ້ເດັກຍິງ ແລະ ແມ່ຍິງ ມີໂອກາດໄປໂຮງຮຽນ.

# ການແຂ່ງຂັນຮູບແຕ້ມ ປະຈຳປີ 2011

## "ການສຶກສາຂອງເດັກຍິງ ຊ່ວຍພວກເຮົາທຸກຄົນໄດ້ແນວໃດ?"

ວັນສິ້ນສຸດການສົ່ງ

**ຮູບແຕ້ມທຸກໆແຜ່ນຕ້ອງສົ່ງຊ້າສຸດໃນວັນທີ 1 ສິງຫາ 2011.**

ຄູ່ຮ່ວມງານຂອງອົງການສະຫະປະຊາຊາດ ສຳລັບການລິເລີ່ມການສຶກສາເດັກຍິງ (UNGEI) ປະຈຳອາຊີຕາເວັນອອກ ແລະ ປາຊີຟິກ (EAP) ແລະ ອາຊີຕາເວັນອອກສ່ຽງໃຕ້ (SA), ມີຄວາມຍິນດີຮຽນເຊີນເຂົ້າຮ່ວມການແຂ່ງຂັນຮູບແຕ້ມປະຈຳປີທີ 3 ກ່ຽວກັບການສົ່ງເສີມຄວາມສະເໝີພາບ ລະຫວ່າງ ຍິງ-ຊາຍ ໃນການສຶກສາ.

ປີນີ້, ມີຄວາມຍິນດີເປັນຢ່າງຍິ່ງ ໃຫ້ຜູ້ແຂ່ງຂັນແຕ້ມຮູບ ສົ່ງຮູບແຕ້ມຈາກແນວຄວາມຄິດທີ່ວ່າ ການສຶກສາຂອງເດັກຍິງຊ່ວຍພວກເຮົາທັງໝົດໄດ້ແນວໃດ.

### ລາງວັນ

- ຮູບແຕ້ມທີ່ຊະນະການປະກວດ 13 ຮູບ ຈະຖືກອອກໃນປະຕິທິນ "ຄວາມສະເໝີພາບ ລະຫວ່າງ ຍິງ-ຊາຍ ໃນການສຶກສາ ປະຈຳປີ 2012" ຂອງ UNGEI (EAP and SA) ຊຶ່ງຈະຖືກແຈກຢາຍຢ່າງກວ້າງຂວາງໃນຂົງເຂດພາກພື້ນອາຊີປາຊີຟິກ.
- ຜູ້ທີ່ຊະນະການປະກວດຮູບແຕ້ມນັ້ນ ຈະໄດ້ຮັບໃບຍ້ອງຍໍ ຢັ້ງຢືນຜົນງານ ແລະ ເອົາອອກໃນປະຕິທິນ 2012.
- ຮູບແຕ້ມທີ່ຊະນະການປະກວດນັ້ນ ຈະຖືກອອກໃນແວບໄຊທ໌ຂອງອົງການຈັດຕັ້ງຕ່າງໆ. ນອກຈາກນັ້ນ, ຮູບແຕ້ມທີ່ຊະນະ ແລະ ຮູບແຕ້ມອື່ນໆ ຈະຖືກຄູ່ຮ່ວມງານຂອງ UNGEI ນຳໄປພິມໃຊ້ໃນວຽກງານຕ່າງໆເຊັ່ນ ເອກະສານເຜີຍແຜ່, ບົດສະເໜີ, ແວບໄຊທ໌ ແລະ ສື່ສົ່ງເສີມຄວາມສະເໝີພາບ ແລະ ສື່ໂຄສະນາຕ່າງໆ.

### ລັກສະນະສະເພາະຂອງການແຕ້ມ

ຮູບແຕ້ມຕ້ອງປະກອບແນວຄວາມຄິດ ແລະ ດ້ວຍເນື້ອໃນ "ການສຶກສາຂອງເດັກຍິງ ຊ່ວຍພວກເຮົາທັງໝົດໄດ້ແນວໃດ."

- ຂະໜາດຂອງຮູບແຕ້ມຕ້ອງແມ່ນເທົ່າກັບເຈ້ຍ A4 ເທົ່ານັ້ນ.
- ຮູບແຕ້ມສາມາດເປັນສີ ຫຼື ຂາວດຳ ກໍໄດ້.
- ສາມາດແຕ້ມດ້ວຍອຸປະກອນຕ່າງໆ (ສີທຽນ, ສໍດຳ, ຟອຍແຕ້ມຮູບ ແລະ ອື່ນໆ) ທີ່ເຈົ້າມັກ.
- ຮູບແຕ້ມສາມາດພັນລະນາເຖິງກິດຈະກຳຕ່າງໆ, ຕົວຢ່າງ:
  - ການເຄື່ອນໄຫວກິລາ
  - ກິດຈະກຳຢູ່ບ້ານ
  - ການຫຼິ້ນຮ່ວມກັນ
  - ສະພາບແວດລ້ອມຂອງໂຮງຮຽນ

### ການສະຫງວນລິຂະສິດ

ໃນການສົ່ງຮູບແຕ້ມມາປະກວດນັ້ນ, ສະມາຊິກຂອງອົງການ UNGEI (EAP and SA) ມີສິດໃສ່ຊື່ ແລະ ນາມສະກຸນ, ປະເທດ ແລະ ອາຍຸ ຂອງຜູ້ແຕ້ມ ຈະເປັນດ້ວຍຈຸດປະສົງພິມອອກ, ໃຊ້ໃນ ບົດສະເໜີຕ່າງໆ, ແວບໄຊທ໌, ເອກະສານ ແລະ ສື່ສົ່ງເສີມຄວາມສະເໝີພາບ ທີ່ກ່ຽວຂ້ອງກັບວຽກຂອງສະມາຊິກອົງການຈັດຕັ້ງສະ ມາຊິກ ໂດຍປາສະຈາກການຊົດໃຊ້ແທນຄ່າແຮງງານ, ການແຈ້ງ ຫຼື ຂໍອະນຸຍາດ ແຕ່ປະການໃດ.

### ໃຜແດມີເງື່ອນໄຂປະກວດຮູບແຕ້ມ?

- ເປັນຜູ້ຖືສັນຊາດ ແລະ ຜູ້ອາໄສຢູ່ ໃນບັນດາປະເທດ ອາຊີ ແລະ ປາຊີຟິກ.
- ຜູ້ສະໝັກຕ້ອງແມ່ນອາຍຸບໍ່ເກີນ 18 ປີ ຫຼື ຕ່ຳກວ່ານັ້ນ.
- ທັງເດັກຍິງ ແລະ ເດັກຊາຍ ລ້ວນແລ້ວແຕ່ຖືກຊຸກຍູ້ໃຫ້ເຂົ້າຮ່ວມ.

### ຈຳນວນຮູບແຕ້ມທີ່ສົ່ງປະກວດ

ນັກແຕ້ມຮູບແຕ່ລະຄົນສາມາດສົ່ງຮູບແຕ້ມໄປປະກວດ ໜຶ່ງແຜ່ນ ຫຼື ຫຼາຍກວ່ານັ້ນກໍໄດ້.

### ວິທີການສົ່ງເຮັດແນວໃດ?

ກະລຸນາຕື່ມຂໍ້ມູນສ່ວນຕົວໃສ່ໃນແບບຟອມທີ່ກຳນົດໄວ້ຢູ່ດ້ານຫຼັງນີ້ ໃສ່ຮູບແຕ້ມແຕ່ລະໃບ ດ້ວຍການໃສ່ຊື່ ແລະ ນາມສະກຸນ , ອາຍຸ, ເພດ ແລະ ປະເທດຂອງຕົນເອງໃສ່ໃຫ້ຄົບຖ້ວນ.

ການສົ່ງຮູບແຕ້ມຂອງແຕ່ລະຄົນ ແມ່ນມີການຮັບປະກັນຄວາມປອດໄພດ້ານຄວາມເຊື່ອໝັ້ນຄື ມີແຕ່ຊຽນຊື່ຂອງນັກແຕ້ມ, ອາຍຸ ແລະ ປະເທດ ໃສ່ໃນເອກະສານທີ່ຈະພິມເຜີຍແຜ່ ແລະ ໃນແວບໄຊທ໌ຂອງ UNGEI ເທົ່ານັ້ນ, ບໍ່ຕ້ອງການຂໍ້ມູນອື່ນໃດເລີຍ.

ໃຫ້ສົ່ງທັງຮູບແຕ້ມຕົວຈິງ ແລະ ຖ່າຍຮູບແຕ້ມດັ່ງກ່າວດ້ວຍກ້ອງດີຈີໂຕ ມາພ້ອມ.

ກະລຸນາ ສົ່ງຮູບແຕ້ມມາ**ທາງໄປສະນີ** ໃນທີ່ຢູ່ຕໍ່ໄປນີ້:
UNESCO Bangkok
APPEAL Unit
920 Sukhumvit Road, Prakanong, Klongtoey
Bangkok 10110, Thailand

ຫຼື ດ້ວຍອີເມວເຖິງ: gender.bgk@unesco.org
(ການສົ່ງຮູບແຕ້ມທີ່ຖ່າຍເປັນດີຈີໂຕນັ້ນ ແມ່ນໃຫ້ໃຊ້ລະບົບ TIFF, EPS ຫຼື JPEG ດ້ວຍຂະໜາດຢ່າງນ້ອຍ 300 dpi)

### ການໃຫ້ຄະແນນສຽງ

ຮູບແຕ້ມທຸກແຜ່ນທີ່ໄດ້ຮັບນັ້ນ ຈະນຳໃຊ້ວິທີຄັດເລືອກໂດຍຜ່ານຂະບວນການໃຫ້ຄະແນນສຽງຄື: 1) ຮອບທີໜຶ່ງແມ່ນໃຫ້ຄະແນນສຽງໂດຍຄູ່ຮ່ວມງານຂອງອົງການ UNGEI; 2) ຮອບທີສອງ ແມ່ນໃຊ້ວິທີໃຫ້ຄະແນນສຽງຕາມສາຍອອນໄລນ ແລະ ຈະເປີດການໃຫ້ຄະແນນຈາກສາທາລະນະອີກ.

ຮູບແຕ້ມທີ່ຊະນະນັ້ນ
ຈະຖືກປະກາດຢ່າງເປັນທາງການໃນເດືອນພະຈິກ (11) 2011.

ຂໍ້ມູນເພີ່ມເຕີມ, ກະລຸນາສົ່ງອີເມວໄດ້ທີ່:
gender.bgk@unesco.org

UNGEI United Nations Girls' Education Initiative

# DRAWING CONTEST 2011

## "ການສຶກສາຂອງເດັກຍິງ ຊ່ວຍພວກເຮົາທຸກຄົນໄດ້ແນວໃດ?"

## ແບບຟອມລົງທະບຽນ

ສຳລັບແຕ່ລະຮູບແຕ້ມ ແລະ ແຕ່ລະຄົນທີ່ສົ່ງຮູບເຂົ້າແຂ່ງຂັນ, ກະລຸນາຈົ່ງບອກລະອຽດ:

**ຊື່:** ....................................................................................................................................................

**ນາມສະກຸນ:**.............................................................................................................................................

**ອາຍຸ:**......................................................................................................................................................

**ເພດ:**......................................................................................................................................................

**ປະເທດ:**..................................................................................................................................................

**ທີ່ຢູ່ທາງໄປສະນີ:**.......................................................................................................................................

**ອີເມວ:.......................................................................................................................................................**

ຮູບແຕ້ມທີ່ສົ່ງມາປະກວດນັ້ນ, ອົງການ UNGEI ແລະ ສະມາຊິກຄູ່ຮ່ວມງານ (EAP ແລະ SA) ມີສິດນຳໃຊ້ ຊື່ ແລະ ນາມສະກຸນ, ອາຍຸ ແລະ ປະເທດຂອງນັກແຕ້ມ (ບໍ່ຕ້ອງການຂໍ້ມູນອື່ນອີກ) ເພື່ອນຳໄປພິມໃຊ້ໃນຈຸດປະສົງຕ່າງໆ ກ່ຽວກັບເອກະສານເຜີຍແຜ່, ບົດສະເໜີ, ແວບໄຊທ໌ ແລະ ສີ່ສິ່ງເສີມ ແລະ ໂຄສະນາຕ່າງໆ ທີ່ກ່ຽວຂ້ອງກັບວຽກງານດັ່ງກ່າວຂອງອົງການ ໂດຍປາສະຈາກ ການຊົດເຊີຍຄ່າແຮງງານ, ການແຈ້ງລ່ວງໜ້າ ຫຼື ການຂໍອະນຸຍາດ.

ລາຍເຊັນຂອງນັກແຕ້ມ

...................................

ລາຍເຊັນຂອງຜູ້ປົກຄອງ/ຄູ

.....................................